ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ:....8809..../ຍທຂ

ນະຄອນຫຼວງວຽງຈັນ, ວັນທີ:.......28/6/10

# ຂໍ້ຕົກລົງ

## ຂອງທ່ານລັດຖະມົນຕີວ່າການ

## ວ່າດ້ວຍ: ການອະນຸມັດ ນຳໃຊ້ ປຶ້ມຄູ່ມືການຄຸ້ມຄອງການເງິນພາຍໃນ, ປຶ້ມຄູ່ມືການບັນຊີ ແລະ ໂປແກຣມບັນຊີ ແອັກແພັກ (ACCPAC) ໃນຂະແໜງ ຍທຂ ໃນຂອບເຂດທົ່ວປະເທດ.

- ອີງໃສ່ດຳລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 373/ນຍ ລົງວັນທີ 22/10/2007.
- ອີງຕາມການເຫັນດີເອກະພາບກັນລະຫວ່າງກະຊວງ ຍທຂ ແລະ ອົງການທະນາຄານໂລກ ກ່ຽວກັບແຜນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການເງິນຂອງໂຄງການຂະແໜງຂົວທາງ ໃນຂອບເຂດທົ່ວປະເທດ.
- ອີງຕາມການສະເໜີຂອງກົມແຜນການ ແລະ ການຮ່ວມມື, ສະບັບເລກທີ່ 8799/ກຜຮ ລົງວັນທີ 24 ມິຖຸນາ 2010

## ລັດຖະມົນຕີວ່າການຕົກລົງ:

**ມາດຕາ 1:** ອະນຸມັດ ນຳໃຊ້ ປຶ້ມຄູ່ມືການຄຸ້ມຄອງການເງິນພາຍໃນ, ປຶ້ມຄູ່ມືການບັນຊີ ແລະ ໂປແກຣມບັນຊີ ແອັກແພັກ (ACCPAC) ໃນຂະແໜງ ຍທຂ ໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ມອບໃຫ້ກົມແຜນການ ແລະ ການຮ່ວມມື ເປັນຜູ້ຊີ້ນຳ ແລະ ປະສານງານກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຕົວຈິງໃຫ້ໄດ້ຮັບຜົນດີ.

**ມາດຕາ 3:** ບັນດາຂະແໜງການເງິນ, ພະແນກແຜນການ ແລະ ງົບປະມານຂອງບັນດາກົມ, ກອງ, ອົງການ, ໂຮງຮຽນ, ສະຖາບັນ, ສູນຝຶກ, ກອງທຶນຕ່າງໆ ແລະ ບັນດາພະແນກ ຍທຂ ປະຈຳແຂວງ, ນະຄອນຫຼວງ ມີໜ້າທີ່ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ ມື້ລົງລາຍເຊັນເປັນຕົ້ນໄປ.

ບ່ອນສົ່ງ:

| | |
|---|---|
| - ຫ້ອງການກະຊວງ ຍທຂ | 1 ສະບັບ |
| - ບັນດາ ກົມ,ກອງ,ອົງການ,ໂຮງຮຽນ, ສະຖາບັນ,ສູນຝຶກ,ກອງທຶນຕ່າງໆ | ບ່ອນລະ 1 ສະບັບ, |
| - ພະແນກ ຍທຂ ແຂວງ,ນະຄອນຫຼວງ | ບ່ອນລະ 1 ສະບັບ, |
| - ເກັບມ້ຽນ | 1 ສະບັບ, |

ລັດຖະມົນຕີວ່າການ

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ສົມມາດ ພົລເສນາ

LAO PEOPLE'S DEMOCRATIC REPUBLIC
Peace Independence Democracy Unity Prosperity

---

Ministry of Public Works and Transport
Department of Planning and Cooperation

REF No....8824.../DPC
Vientiane Capital, date...25-6-2010.

To: Mr. Zhi Liu,
Task Team Manager of the World Bank,
Bangkok office, Thailand

Cc: Mr. Sombath Southivong
Task Team Leader to RMP2
The World Bank office,
Vientiane Capital, Lao PDR

Subject: The request for announcement of grant effectiveness for Lao Road Sector Project.

Dear Mr. Zhi Liu,

As you are very well aware, all conditions for effectiveness have already fulfilled and the last condition for Financial Management Manual (FMM) has been endorsed by MPWT. Please see the enclosed letter of the Minister approval for FMM no. 8809/MPWT dated 25 June 2010. Therefore, I kindly request your consideration to announce the project effectiveness at your earliest convenience.

I am looking forward to receive your announcement to be able to process the project implementation as the work planned.

Yours sincerely,

Math SOUNMALA
Director General
Department of Planning and Cooperation
MPWT